ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
----=====000=====-----

Lao
ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

ເລກທີ 011 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 07 MAY 2014

**ຂໍ້ຕົກລົງ**
**ວ່າດ້ວຍຄ່າທຳນຽມສຳລັບການອອກຈຳໜ່າຍຮຸ້ນກູ້ ຢູ່ຕ່າງປະເທດ**

- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ ລົງວັນທີ 24 ກໍລະກົດ 2013;
- ອີງຕາມແຈ້ງການກ່ຽວກັບການລະດົມທຶນ ໂດຍການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນຢູ່ຕ່າງປະເທດ ສະບັບເລກທີ 001/ຄຄຊ ລົງວັນທີ 14 ກຸມພາ 2014.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກຂໍ້ຕົກລົງ:**

**ມາດຕາ 1** ບໍລິສັດທີ່ອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຕ້ອງປະຕິບັດພັນທະຄ່າທຳນຽມ ໃຫ້ແກ່ ສຳນັກງານ ຄຄຊ ດັ່ງນີ້:

- ຄ່າຍື່ນຄຳຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຈຳນວນ ສິບຫ້າລ້ານກີບ (15.000.000 ກີບ) ແລະ ຕ້ອງຊຳລະພາຍໃນວັນທີ່ຍື່ນສຳນວນຄຳຮ້ອງ ຕໍ່ ສຳນັກງານ ຄຄຊ;
- ຄ່າອອກໜັງສືຮັບຮູ້ກ່ຽວກັບການສະເໜີອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຈຳນວນ ສູນຈຸດສູນໜຶ່ງສ່ວນຮ້ອຍ (0,01%) ຂອງມູນຄ່າຮຸ້ນກູ້ທີ່ອອກຈຳໜ່າຍໃນແຕ່ລະຄັ້ງ ແຕ່ບໍ່ໃຫ້ຕ່ຳກວ່າ ສາມສິບລ້ານກີບ (30.000.000 ກີບ) ແລະ ຕ້ອງຊຳລະພາຍໃນກຳນົດເວລາ ສາມສິບວັນ ລັດຖະການ ນັບແຕ່ວັນສິ້ນສຸດການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ເປັນຕົ້ນໄປ;
- ຄ່າຄຸ້ມຄອງປະຈຳປີ ຈຳນວນ ສິບລ້ານກີບ (10.000.000 ກີບ) ຍົກເວັ້ນປີທຳອິດທີ່ຍື່ນຄຳຮ້ອງຂໍອອກຈຳໜ່າຍຮຸ້ນກູ້ ແລະ ຕ້ອງຊຳລະພາຍໃນໄຕມາດທີໜຶ່ງຂອງປີຖັດໄປ.

**ມາດຕາ 2** ມອບໃຫ້ ສຳນັກງານ ຄຄຊ, ບໍລິສັດທີ່ອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 3** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ ★ ປະທານ

ສົມສະຫວາດ ເລັ່ງສະຫວັດ